**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ

ເຈົ້າໜ້າທີ່ທະບຽນວິສາຫະກິດ

ເລກທີ 102 /ຈທວ

ນະຄອນຫຼວງວຽງຈັນ, ວັນທີ 03 ພຶດສະພາ 2022

# ແຈ້ງການ

**ເຖິງ: ບັນດາພາກສ່ວນຕ່າງໆ (ທັງພາກລັດ ແລະ ເອກະຊົນ) ໃນຂອບເຂດທົ່ວປະເທດ**

**ເລື່ອງ: ຍົກເລີກແຈ້ງໂຈະການເຄື່ອນໄຫວທຸລະກິດຊົ່ວຄາວຂອງວິສາຫະກິດ ຈຳນວນ 4 ຫົວໜ່ວຍ ຕາມໜັງສືສະເໜີຂອງກົມສ່ວຍສາອາກອນ ກະຊວງການເງິນ**

- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ ເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມ ແຈ້ງໂຈະການເຄື່ອນໄຫວທຸລະກິດຊົ່ວຄາວ ເລກທີ 210/ຈທວ, ລົງວັນທີ 18 ສິງຫາ 2021;
- ອີງຕາມ ໜັງສືສະເໜີຂອງກົມສ່ວຍສາອາກອນ, ກະຊວງການເງິນ ເລກທີ 1760/ກສອ, ລົງວັນທີ 22 ເມສາ 2022.

ເຈົ້າໜ້າທີ່ທະບຽນວິສາຫະກິດ, ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ກະຊວງອຸດສາຫະກຳ ແລະ ການຄ້າ ແຈ້ງໃຫ້ບັນດາພາກສ່ວນຕ່າງໆ (ທັງພາກລັດ ແລະ ເອກະຊົນ) ໃນຂອບເຂດທົ່ວປະເທດ ຊາບວ່າ:

1. ຍົກເລີກແຈ້ງໂຈະການເຄື່ອນໄຫວທຸລະກິດຊົ່ວຄາວ ຂອງວິສາຫະກິດ ຈຳນວນ 4 ຫົວໜ່ວຍ ຕາມໜັງສືສະເໜີຂອງກົມສ່ວຍສາອາກອນ, ກະຊວງການເງິນ ເລກທີ 1760/ກສອ, ລົງວັນທີ 22 ເມສາ 2022. ເຮັດໃຫ້ວິສາຫະກິດດັ່ງກ່າວສາມາດສືບຕໍ່ເຄື່ອນໄຫວໄດ້ໂດຍໃຫ້ສອດຄ່ອງຕາມກົດໝາຍ ແລະ ລະບຽບການກ່ຽວຂ້ອງ ນັບແຕ່ວັນທີ່ອອກແຈ້ງການສະບັບນີ້ ເປັນຕົ້ນໄປ;
2. ສຳລັບ ວິສາຫະກິດ ທີ່ຍັງຖືກມາດຕະການ ຕາມໜັງສືແຈ້ງໂຈະການເຄື່ອນໄຫວທຸລະກິດຊົ່ວຄາວ ສະບັບເລກທີ 210/ຈທວ ລົງວັນທີ 18 ສິງຫາ 2021 ແມ່ນໃຫ້ສືບຕໍ່ເຂົ້າໄປພົວພັນກັບເຈົ້າໜ້າທີ່ສ່ວຍສາອາກອນ, ກົມສ່ວຍສາອາກອນ, ກະຊວງການເງິນ **ກ່ອນວັນທີ 29 ເມສາ 2022** ເພື່ອປະຕິບັດໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ຂອງຂະແໜງສ່ວຍສາອາກອນ. ຖ້າຫາກ ກາຍກຳນົດເວລາຂ້າງເທິງນີ້ ວິສາຫະກິດດັ່ງກ່າວ ຈະຖືກພິຈາລະນາແຈ້ງໂຈະການເຄື່ອນໄຫວທຸລະກິດຖາວອນ;
3. ຈຳນວນ ວິສາຫະກິດທີ່ສືບຕໍ່ໂຈະ ແລະ ຍົກເລີກໂຈະ ການເຄື່ອນໄຫວທຸລະກິດຊົ່ວຄາວ ມີດັ່ງນີ້:

| ຈຳນວນແຈ້ງໂຈະຊົ່ວຄາວທັງໝົດ | ຍົກເລີກຜ່ານມາ | ຍົກເລີກຄັ້ງນີ້ | ຈຳນວນທີ່ຍັງເຫຼືອປັດຈຸບັນ |
|---|---|---|---|
| 210 ຫົວໜ່ວຍ | 53 ຫົວໜ່ວຍ | 4 ຫົວໜ່ວຍ | 153 ຫົວໜ່ວຍ |

ນອກນີ້ທ່ານຍັງສາມາດກວດສອບ ໄດ້ຕາມຄິວອາໂຄດ (QR Code) ຄັດຕິດແຈ້ງການສະບັບນີ້ ຫຼື ໂດຍຜ່ານເວັບໄຊ້ WWW.NED.MOIC.GOV.LA ຫຼື Facebook ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ປະຕິບັດ.

**ເຈົ້າໜ້າທີ່ທະບຽນວິສາຫະກິດ**

(ສືບຕໍ່ໂຈະຊົ່ວຄາວ) (ຍົກເລີກໂຈະຊົ່ວຄາວ)

ເຈົ້າໜ້າທີ່ ທະບຽນວິສາຫະກິດ

ສຸລິຄຳ ແກ້ວສະຫວ່າງ

ບ່ອນສົ່ງ:

- ກົມສ່ວຍສາອາກອນ 1 ສະບັບ;
- ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ 1 ສະບັບ;
- ວິສາຫະກິດທີ່ກ່ຽວຂ້ອງ 1 ສະບັບ;
- ສຳເນົາ 1 ສະບັບ.

Scanned with CamScanner